# ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 12

**“ເພີ່ມທະວີການເປັນຄູ່ຮ່ວມທີ່ມີປະສິດທິຜົນໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ VIII - ເພື່ອນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ພາຍໃນປີ 2020”**

**ຄັ້ງວັນທີ 27 ພະຈິກ 2015**
**ທີ່ ສູນການຮ່ວມມື ແລະ ຝຶກອົບຮົມສາກົນ (ຫຼັກ 5), ນະຄອນຫຼວງວຽງຈັນ**

## ວາລະກອງປະຊຸມ

### ພາກເຊົ້າ

08:00 – 08:30 **ລົງທະບຽນ**

**ພິທີໄຂກອງປະຊຸມໂຕະມົນລະດັບສູງຄັ້ງທີ່ 12 ຢ່າງເປັນທາງການ**

08:30 – 09:00 **ກ່າວມີຄຳເຫັນ ແລະ ໄຂກອງປະຊຸມ**
*ໂດຍ: ພະນະທ່ານ ທອງສິງ ທຳມະວົງ,*
*ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ*

09:00 – 09:30 **ກ່າວມີຄຳເຫັນຕໍ່ກອງປະຊຸມ**
*ໂດຍ: ທ່ານ ນາງ ເຮເລັນ ຄລາກ,*
*ຜູ້ອຳນວຍການໃຫຍ່ຂອງອົງການສະຫະປະຊາຊາດເພື່ອການພັດທະນາທັງເປັນປະທານກຸ່ມພັດທະນາຂອງອົງການສະຫະປະຊາຊາດ*

**ພິທີເຊັນຮັບຮອງເອົາ ຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ຢ່າງເປັນທາງການ**

09:30 – 09:35 **ນຳສະເໜີໂດຍຫຍໍ້ ກ່ຽວກັບຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ**
*ໂດຍ: ທ່ານ ດຣ. ກິແກ້ວ ຈັນທະບູຣີ,*
*ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ*

09:35 – 09:40 **ພິທີການເຊັນຮັບຮອງ ຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ**

**ຕາງໜ້າຝ່າຍລັດຖະບານ ແຫ່ງ ສປປ ລາວ**
*ໂດຍ: ທ່ານ ສະເຫຼີມໄຊ ກົມມະສິດ*
*ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ*

**ຕາງໜ້າຝ່າຍຄູ່ຮ່ວມພັດທະນາ**
*ໂດຍ: ທ່ານ ນາງ ຄາຣິນາ ອິມໂມເນັນ*
*ຜູ້ປະສານງານຂອງອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ*

09:40 – 09:50 **ກ່າວມີຄຳເຫັນຕໍ່ກອງປະຊຸມ ກ່ຽວກັບການເປັນຄູ່ຮ່ວມ ເພື່ອການພັດທະນາ ທີ່ມີປະສິດທິຜົນ**
*ໂດຍ ທ່ານ ນາງ ດຣ. ຊາມເຊດ ອາກາຕາຣ໌,*
*ຮອງເລຂາທິການໃຫຍ່ຂອງອົງການສະຫະປະຊາຊາດ ທັງເປັນເລຂາສູງສຸດຂອງຄະນະກຳມະການດ້ານເສດຖະກິດ ແລະ ສັງຄົມ ສຳລັບພາກພື້ນອາຊີ-ປາຊີຟິກ*

| ກິດຈະກຳສຳຄັນທີ່ກ່ຽວຂ້ອງ |
|---|

09:50 – 09:55 **ຖ່າຍຮູບຮ່ວມກັນ** ກັບ ພະນະທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ພະນະທ່ານ ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ທ່ານ ຜູ້ອຳນວຍການໃຫຍ່ຂອງອົງການສະຫະປະຊາຊາດເພື່ອການພັດທະນາ, ທ່ານ ເລຂາສູງສຸດຂອງຄະນະກຳມະການດ້ານເສດຖະກິດ ແລະ ສັງຄົມ ສຳລັບພາກພື້ນອາຊີ-ປາຊີຟິກ ແລະ ເອກອະທິບໍດີຮັບຜິດຊອບພາກພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ **(ພິທີກອນຈະເປັນຜູ້ປະກາດ)**

1. ບັນດາທ່ານລັດຖະມົນຕີວ່າການ/ລັດຖະມົນຕີຊ່ວຍວ່າການ ແລະ ທ່ານເຈົ້າແຂວງ/ຮອງເຈົ້າແຂວງ
2. ຫົວໜ້າຄະນະຜູ້ແທນຂອງບັນດາຄູ່ຮ່ວມພັດທະນາ/ເອກອັກຄະລັດຖະທູດ ແລະ ຫົວໜ້າ/ຮອງຫົວໜ້າບັນດາອົງການຈັດຕັ້ງສາກົນ

09:55 – 10:10 **- ຢ້ຽມຊົມຫ້ອງວາງສະແດງກ່ຽວກັບການຮ່ວມມືເພື່ອການພັດທະນາເພື່ອຕ້ອນ ຮັບກອງປະຊຸມໂຕະມົນລະດັບສູງຄັ້ງທີ່ 12**

**- ພັກຜ່ອນດື່ມຊາ-ກາເຟ**

---

**ປະທານກອງປະຊຸມໂຕະມົນລະດັບສູງຄັ້ງທີ່ 12:**

**ພະນະທ່ານ ທອງລຸນ ສີສຸລິດ**

*ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ*

**ປະທານຮ່ວມກອງປະຊຸມໂຕະມົນລະດັບສູງຄັ້ງທີ່ 12:**

**ທ່ານ ຮາວລຽງ ຊູ**

*ຜູ້ຊ່ວຍເລຂາທິການໃຫຍ່ຂອງອົງການສະຫະປະຊາຊາດ, ຜູ້ຊ່ວຍຜູ້ອຳນວຍການ ໃຫຍ່ຂອງ ອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນເອກອະທິບໍດີຮັບຜິດຊອບພາກພື້ນ ອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ*

**ພາກທີ່ I – ຜົນສຳເລັດໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VII ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII – ກ້າວໄປສູ່ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ພາຍໃນປີ 2020**

10:10 – 10:30 **ນຳສະເໜີ ກ່ຽວກັບຜົນສຳເລັດຕົ້ນຕໍ, ສິ່ງທ້າທາຍແລະບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ່ VII, ແລະ ເປົ້າໝາຍບູລິມະສິດແລະມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ VIII**

*ໂດຍ: ທ່ານ ສົມດີ ດວງດີ,*

*ລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ*

10:30 – 11:30 **ສົນທະນາ ກ່ຽວກັບ ໝາກຜົນທີ່ I**

**1.1** ***ການເຕີບໂຕ ແລະ ການຄຸ້ມຄອງເສດຖະກິດມະຫາພາກ***

- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງໜ່ວຍງານເສດຖະກິດມະຫາພາກ (ປະມານ 5 ນາທີ)
- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ (ປະມານ 5 ນາທີ)

**1.2** ***ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດູນ ແລະ ເປີດກວ້າງການເຊື່ອມໂຍງກັບພາກພື້ນ ແລະ ສາກົນ***

- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງໜ່ວຍງານຂະແໜງການພື້ນຖານໂຄງລ່າງ (ປະມານ 5 ນາທີ)
- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງໜ່ວຍງານຂະແໜງການປົກຄອງ (ປະມານ 5 ນາທີ)

**1.3** ***ຫຼັງຈາກນັ້ນ ເປີດໂອກາດໃຫ້ຄະນະຜູ້ແທນທ່ານອື່ນໆ ປະກອບຄຳເຫັນ (ເຊິ່ງມີເວລາທັງໝົດປະມານ 40 ນາທີ)***

11:30 – 12:30 **ສົນທະນາ ກ່ຽວກັບ ໝາກຜົນທີ່ II**

***2.1 ການແກ້ໄຂບັນຫາການຂາດສານອາຫານ ແລະ ໂພຊະນາການ ດ້ວຍວິທີການມີສ່ວນຮ່ວມຂອງຫຼາຍພາກສ່ວນ***

- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງ ໜ່ວຍງານຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ (ປະມານ 5 ນາທີ)
- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງ ໜ່ວຍງານຂະແໜງການສາທາລະນະສຸກ (ປະມານ 5 ນາທີ) *(ໝາຍເຫດ: ປະທານໜ່ວຍງານຂະແໜງການສາທາລະນະສຸກ – ກະຊວງສາທາລະນະສຸກ ຈະໄດ້ປະກອບຄຳເຫັນ ໃນນາມກອງເລຂາ ຄະນະກຳມະການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ)*

***2.2 ການພັດທະນາຊັບພະຍາກອນມະນຸດ, ການປັບປຸງການໃຫ້ບໍລິການຂອງພາກລັດ ແລະ ພັດທະນາຂະແໜງການສັງຄົມ***

- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງ ໜ່ວຍງານຂະແໜງການສຶກສາ (ປະມານ 5 ນາທີ)
- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງ ໜ່ວຍງານຂະແໜງການຄວບຄຸມຢາເສບຕິດ (ປະມານ 5 ນາທີ)

**2.3** ***ຫຼັງຈາກນັ້ນ ເປີດໂອກາດໃຫ້ຄະນະຜູ້ແທນທ່ານອື່ນໆ ປະກອບຄຳເຫັນ (ເຊິ່ງມີເວລາທັງໝົດປະມານ 40 ນາທີ)***

12:30 – 13:30 **ຮັບປະທານອາຫານທ່ຽງ**

## <u>ພາກບ່າຍ</u>

**ສືບຕໍ່ ພາກທີ່ I**

13:30 – 14:30 **ສົນທະນາ ກ່ຽວກັບ ໝາກຜົນທີ່ III**

***3.1 ການປົກປັກຮັກສາສະພາບແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດໃຫ້ຍືນຍົງ***

***3.2 ກະກຽມຄວາມພ້ອມເພື່ອຮັບມືກັບຜົນກະທົບພ້ອມທັງຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ ແລະ ການປ່ຽນແປງດິນຟ້າອາກາດ, ແລະ ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງຜົນຜະລິດກະສິກຳທີ່ເກີດຈາກຜົນກະທົບຂອງໄພພິບັດ***

- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງ ໜ່ວຍງານຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ປະມານ 5 ນາທີ)
- ຜູ້ປະກອບຄຳເຫັນ: ຜູ້ຕາງໜ້າ ຂອງປະທານ ແລະ ປະທານຮ່ວມ ຂອງ ໜ່ວຍງານຂະແໜງການເກັບກູ້ລະເບີດ (ປະມານ 5 ນາທີ)

**3.3** ***ຫຼັງຈາກນັ້ນ ເປີດໂອກາດໃຫ້ຄະນະຜູ້ແທນທ່ານອື່ນໆ ປະກອບຄຳເຫັນ (ເຊິ່ງມີເວລາທັງໝົດປະມານ 50 ນາທີ)***

**ພາກທີ່ II – ການເປັນຄູ່ຮ່ວມກັບສາກົນເພື່ອຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDGs)**

14:30 – 14:45 **ນໍາສະເໜີ ກ່ຽວກັບການເປັນຄູ່ຮ່ວມກັບສາກົນເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃຫ້ແທດເໝາະກັບສະພາບການພັດທະນາຂອງ ສປປ ລາວ**
*ໂດຍ: ທ່ານ ສະເຫຼີມໄຊ ກົມມະສິດ,*
*ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ*

14:45 – 15:45 **ສົນທະນາ**

15:45 – 16:10 **ພັກຜ່ອນດື່ມຊາ-ກາເຟ ແລະ ອາຫານຫວ່າງ**

**ພິທີປິດກອງປະຊຸມໂຕະມົນລະດັບສູງຄັ້ງທີ່ 12 ຢ່າງເປັນທາງການ**

16:10 – 16:20 **ກ່າວມີຄໍາເຫັນຕໍ່ກອງປະຊຸມ**
*ໂດຍ: ທ່ານ ຣາວລຽງ ຊູ, ຜູ້ຊ່ວຍເລຂາທິການໃຫຍ່ຂອງອົງການສະຫະປະຊາຊາດ, ຜູ້ຊ່ວຍຜູ້ອໍານວຍການ ໃຫຍ່ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນເອກອະທິບໍດີຮັບຜິດຊອບພາກພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ*

16:20 – 16:30 **ກ່າວສະຫຼຸບ ແລະ ປິດກອງປະຊຸມຢ່າງເປັນທາງການ**
*ໂດຍ: ພະນະທ່ານ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ*

**ພິທີການພົບປະນັກຂ່າວ ຂອງກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 12**

17:00 – 17:30 **ພິທີຖະແຫຼງຂ່າວ**
*- ໂດຍ ພະນະທ່ານ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ, ແລະ*
*-ທ່ານ ຣາວລຽງ ຊູ, ຜູ້ຊ່ວຍເລຂາທິການໃຫຍ່ຂອງອົງການສະຫະປະຊາຊາດ,ຜູ້ຊ່ວຍຜູ້ອໍານວຍການໃຫຍ່ຂອງອົງການສະຫະປະຊາຊາດເພື່ອການພັດທະນາ ທັງເປັນເອກອະທິບໍດີຮັບຜິດ ຊອບພາກພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ*